Australian Government

GLOBAL INITIATIVE
AGAINST TRANSNATIONAL ORGANIZED CRIME

# ການຕິດຕາມຄວາມສ່ຽງ ໃນເຂດແມ່ນ້ຳຂອງ

MEKONG NETWORK TO COUNTER TRANSNATIONAL CRIME
MNET-CTC

ສະບັບທີ 1

ທັນວາ 2025

Australian Government

ຂໍ້ສະຫງວນລິຂະສິດ

ວາລະສານສະບັບນີ້ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານ ກະຊວງການຕ່າງປະເທດ ແລະ ການຄ້າ. ຄວາມຄິດເຫັນຕ່າງໆທີ່ໄດ້ສະແດງອອກໃນສິ່ງພິມນີ້, ແມ່ນເປັນຂອງຜູ້ຂຽນພຽງແຕ່ຜູ້ດຽວເທົ່ານັ້ນ ແລະ ທັດສະນະ ຫຼື ຄໍາຄິດເຫັນອື່ນໆກໍ່ບໍ່ແມ່ນເປັນ ຂອງລັດຖະບານອົດສະຕຣາລີສະເໝີໄປ.

© 2025 ອົງການລິເລີ່ມລະດັບໂລກເພື່ອຕ້ານອາຊະຍາກຳຂ້າມຊາດ.
ສະຫງວນລິຂະສິດທຸກປະການ.

ຫ້າມບໍ່ໃຫ້ນໍາເອົາເນື້ອໃນສ່ວນໃດໜຶ່ງສ່ວນໜຶ່ງ ບໍ່ວ່າຈະເປັນສ່ວນໃດກໍ່ຕາມທີ່ຢູ່ໃນເອກະ ສານສະບັບນີ້ ໄປຈັດພິມຄືນໃໝ່ ຫຼື ສົ່ງຕໍ່ ບໍ່ວ່າໃນຮູບແບບໃດກໍ່ຕາມ ຫຼື ດ້ວຍວິທີການໃດ ກໍ່ຕາມ ໂດຍທີ່ບໍ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກອົງການລິເລີ່ມລະດັບ ໂລກເພື່ອຕ້ານອາຊະຍາກຳຂ້າມຊາດ.

ທ່ານສາມາດຕິດຕໍ່ສອບຖາມໂດຍກົງໄດ້ທີ່:
The Global Initiative Against Transnational Organized Crime
Avenue de France 23
Geneva, CH-1202 Switzerland

www.globalinitiative.net

# ກ່ຽວກັບວາລະສານ ການຕິດຕາມຄວາມສ່ຽງໃນເຂດແມ່ນ້ຳຂອງ (MEKONG RISK MONITOR)

ຍິນດີຕ້ອນຮັບສູ່ວາລະສານ Mekong Risk Monitor ສະບັບທຳອິດ. ວາລະສານ Mekong Risk Monitor ນີ້ແມ່ນວາລະສານທີ່ຖືກຈັດພິມອອກມາເປັນແຕ່ລະໄລຍະໂດຍເຄືອຂ່າຍແມ່ນ້ຳຂອງເພື່ອຕ້ານອາຊະຍາກຳຂ້າມຊາດ ຫລື MNET-CTC, ເຊິ່ງເປັນໂຄງການທີ່ຈັດຕັ້ງປະຕິບັດຮ່ວມກັບ ອົງການລິເລີ່ມລະດັບໂລກເພື່ອຕ້ານອາຊະຍາກຳຂ້າມຊາດ ຫລື GI-TOC ແລະ ລັດຖະບານອົດສະຕຣາລີ. ວາລະສານດັ່ງກ່າວ ມີເປົ້າໝາຍເພື່ອຕິດຕາມການຂະຫຍາຍຕົວຂອງເສດຖະກິດທີ່ຜິດກົດໝາຍໃນປະເທດກຳປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ ພ້ອມທັງ ຍົກໃຫ້ເຫັນເຖິງ ບັນຫາກ່ຽວກັບການພັດທະນາ, ການປົກຄອງ ແລະ ຄວາມໝັ້ນຄົງໃນລະດັບພາກພື້ນ. ວາລະສານສະບັບນີ້ຜູ້ຂຽນແມ່ນສຶກສາໂດຍ ອີງໃສ່ແຫຼ່ງຂໍ້ມູນມືໜຶ່ງ ແລະ ແຫຼ່ງຂໍ້ມູນມືສອງ, ລວມທັງການສຳພາດຜູ້ມີສ່ວນຮ່ວມທີ່ສຳຄັນເຊັ່ນ: ນັກຂ່າວ, ເຈົ້າໜ້າທີ່ລັດ, ອົງການຈັດຕັ້ງທາງສັງຄົມ ແລະ ການຕິດຕາມຈາກແຫຼ່ງຂໍ້ມູນເປີດເພື່ອວິເຄາະ ແລະ ນຳສະເໜີກ່ຽວກັບ ໄພຂົ່ມຂູ່ ແລະ ຄວາມສ່ຽງທີ່ເກີດຂຶ້ນໃໝ່.

ວາລະສານແຕ່ລະສະບັບແມ່ນຈະນຳສະເຫນີກ່ຽວກັບແນວໂນ້ມ ແລະ ບັນຫາທີ່ສຳຄັນໃນຕະຫຼາດອາຊະຍາກຳຂອງບັນດາປະເທດເຫຼົ່ານີ້, ໂດຍຍົກເອົາສະພາບການປ່ຽນແປງ-ຂະຫຍາຍຕົວໃນລະດັບທ້ອງຖິ່ນມາເຊື່ອມໂຍງກັບ ສະພາບການຂອງພາກພື້ນ ແລະ ໂລກ ເພື່ອເພີ່ມຄວາມເຂົ້າໃຈກ່ຽວກັບຂະບວນອາຊະຍາກຳໃນພາກພື້ນແມ່ນ້ຳຂອງ. ບົດລາຍງານເຫລົ່ານີ້ມີເປົ້າໝາຍເພື່ອສະໜັບສະໜູນດ້ານນະໂຍບາຍ ແລະ ການວາງແຜນໂຄງການໂດຍອີງໃສ່ຫຼັກຖານ ເພື່ອປັບປຸງຄວາມຢືດຢຸ່ນ ແລະ ສົ່ງເສີມການຮ່ວມມືລະຫວ່າງລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານໃນລະດັບສາກົນ. ການຕິດຕາມນີ້ແມ່ນສຸມໃສ່ຕະຫຼາດອາຊະຍາກຳສີ່ປະເພດຄື: ການຂູດຮີດ ແລະ ການລ່ວງລະເມີດທາງເພດຕໍ່ແມ່ຍິງ ແລະ ເດັກຍິງ, ການຫຼອກລວງທາງອິນເຕີເນັດ, ການຄ້າຂາຍຢາເສບຕິດ ແລະ ອາຊະຍາກຳທາງການເງິນ, ເຊິ່ງມີຈຸດປະສົງເພື່ອສະແດງໃຫ້ເຫັນວ່າ ສະພາບການທາງດ້ານການເມືອງ, ເສດຖະກິດ ແລະ ເຕັກໂນໂລຊີທີ່ມີການປ່ຽນແປງນັ້ນ, ໄດ້ສ້າງໂອກາດໃຫ້ແກ່ບັນດາອາຊະຍາກຳແນວໃດ ແລະ ລັດຖະບານ, ຊຸມຊົນ ແລະ ອົງການຈັດຕັ້ງທາງສັງຄົມຈະຕອບສະໜອງກັບບັນຫາດັ່ງກ່າວໄດ້ແນວໃດ.

ພວກເຮົາຂໍເຊີນຊວນບັນດາທ່ານຜູ້ອ່ານ ແລະ ຜູ້ຂຽນບົດຄວາມຕ່າງໆຮ່ວມປະກອບສ່ວນ ແລະ ແບ່ງປັນຄຳຄິດເຫັນ, ຂໍ້ມູນ ຫຼື ແນວຄວາມຄິດຕ່າງໆ ເພື່ອໃຫ້ພວກເຮົາໄດ້ນຳໄປປັບປຸງສະບັບຕໍ່ໆໄປໃນອະນາຄົດ ເພື່ອຊ່ວຍສະທ້ອນ ໃຫ້ເຫັນເຖິງແນວໂນ້ມ, ການມີຫຼັກຖານຕົ້ນສະບັບໃຫມ່ໆ ຫຼື ສະພາບແວດລ້ອມກ່ຽວກັບສະພາບການຂອງການຂະຫຍາຍຕົວທີ່ກຳລັງເກີດຂຶ້ນຢ່າງຕໍ່ເນື່ອງໃນຕະຫຼາດອາດຊະຍາກຳໃນພາກພື້ນ. ສາມາດຕິດຕໍ່ກັບທີມງານ MNET-CTC ໄດ້ທີ່: ioannis.vlassis@globalinitiative.net.

## ກ່ຽວກັບວາລະສານສະບັບນີ້

ວາລະສານສະບັບປະຖົມມະເລີກນີ້, ໄດ້ເວົ້າເຖິງການເຄື່ອນໄຫວກະທຳຜິດທັງໝົດ 5 ດ້ານ ໃນ 5 ບົດຄວາມທີ່ເປັນຕົວກຳນົດຮູບແບບເສດຖະກິດທີ່ຜິດກົດໝາຍໃນພາກພື້ນ. ບົດຄວາມທຳອິດແມ່ນຕິດຕາມການນຳໃຊ້ຊັບສິນດິຈິຕອນໃນການກໍ່ອາຊະຍາກຳທາງການເງິນຢູ່ປະເທດຫວຽດນາມ, ຕິດຕາມການເພີ່ມຂຶ້ນຂອງການສໍ້ໂກງຊັບສິນດິຈິຕອນ ແລະ ການຟອກເງິນ ລວມທັງ ສະທ້ອນໃຫ້ເຫັນເຖິງຊ່ອງຫວ່າງທີ່ມີຢູ່ໃນນິຕິກຳທີ່ກ່ຽວຂ້ອງກັບການກວດກາ, ທີ່ຜູ້ກະທຳຜິດຍັງສືບຕໍ່ສວຍໃຊ້. ບົດຄວາມທີສອງແມ່ນເວົ້າເຖິງການຂະຫຍາຍຕົວຂອງການເຄື່ອນໄຫວຫຼອກລວງທາງອິນເຕີເນັດໃນໄລຍະທີ່ຜ່ານມາໃນເຂດເສດຖະກິດພິເສດສາມຫຼ່ຽມຄຳໃນປະເທດລາວ, ປະເມີນການປາບປາມຄັ້ງຫລ້າສຸດຂອງລັດຖະບານ ແລະ ປຶກສາຫາລືກ່ຽວກັບສິ່ງທີ່ອາດຈະເກີດຂຶ້ນໃນອະນາຄົດຂອງເຂດດັ່ງກ່າວ. ບົດຄວາມທີສາມແມ່ນການພິຈາລະນາເຖິງແມ່ຍິງກຳປູເຈຍທີ່ມີຄວາມສ່ຽງຕໍ່ການຖືກກົດຂີ່, ສືບສວນຮູບແບບການຄ້າເຈົ້າສາວທີ່ສົ່ງໄປປະເທດຈີນຢ່າງຕໍ່ເນື່ອງ ແລະ ການສົມຮູ້ຮ່ວມຄິດຂອງນາຍໜ້າຄົນກາງ ລວມທັງ ເຈົ້າໜ້າທີ່ທີ່ໃຫ້ການສະຫນັບສະຫນູນການຄ້າມະນຸດໃນຮູບແບບດັ່ງກ່າວ. ບົດຄວາມທີສີ່ແມ່ນສຳຫຼວດເບິ່ງວິທີການບໍລິການຈັດສົ່ງສິນຄ້າໂດຍຜ່ານທາງແອັບມືຖືໃນປະເທດໄທ, ທີ່ໄດ້ຖືກສວຍໃຊ້ໂດຍເຄືອຂ່າຍຢາເສບຕິດເພື່ອການຈັດຈຳຫນ່າຍ, ທີ່ເຮັດໃຫ້ເສັ້ນແບ່ງຂອງຄວາມແຕກຕ່າງລະຫວ່າງການບໍລິການທີ່ຖືກຕ້ອງຕາມກົດໝາຍ ແລະ ການຈັດສົ່ງທີ່ຜິດກົດໝາຍນັ້ນບໍ່ຈະແຈ້ງ. ບົດຄວາມສຸດທ້າຍແມ່ນປະເມີນການລັກລອບຂົນເງິນສົດເຂົ້າ ແລະ ອອກຈາກລາວ, ສຳຫຼວດເບິ່ງຄວາມສຳຄັນຂອງເງິນສົດໃນເສດຖະກິດອາຊະຍາກຳທ້ອງຖິ່ນ ແລະ ການທີ່ຊາຍແດນທີ່ມີຊ່ອງຫວ່າງເປີດໂລ່ງ ແລະ ລວມທັງຄວາມລົ້ມເຫຼວຂອງລະບົບການຮັກສາຄວາມປອດໄພ, ທີ່ກາຍເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍເງິນຂ້າມຊາຍແດນ. ເລື່ອງຕ່າງໆທັງຫມົດນີ້ແມ່ນໄດ້ເນັ້ນໃຫ້ເຫັນເຖິງຄວາມສ່ຽງຕ່າງໆທີ່ເກີດຂຶ້ນກັບຊຸມຊົນ, ສະຖາບັນຕ່າງໆຂອງລັດ ແລະ ເສດຖະກິດທ້ອງຖິ່ນໃນພາກພື້ນແມ່ນ້ຳຂອງ.ຄວາມສະດວກໃຫ້ແກ່ການເຄື່ອນຍ້າຍເງິນຂ້າມຊາຍແດນ. ເລື່ອງຕ່າງໆທັງຫມົດນີ້ແມ່ນໄດ້ເນັ້ນໃຫ້ເຫັນເຖິງຄວາມສ່ຽງຕ່າງໆທີ່ເກີດຂຶ້ນກັບຊຸມຊົນ, ສະຖາບັນຕ່າງໆຂອງລັດ ແລະ ເສດຖະກິດທ້ອງຖິ່ນໃນພາກພື້ນແມ່ນ້ຳຂອງ.

ອະດີດຜູ້ນຳຂອງສະຫະພາບ ຟຣີດອມ ໄຣເດີ (Freedom Rider) ໄດ້ກ່າວໄວ້ວ່າ ຕຳຫຼວດສ່ວນຫຼາຍຄິດວ່າວ່າ ຫົວໜ່ວຍບໍລິການນັ້ນມີການນຳໃຊ້ກົດລະບຽບທີ່ເຂັ້ມງວດຕໍ່ຜູ້ຂົນສົ່ງທີ່ເປັນລູກຈ້າງຂອງຕົນຢູ່ແລ້ວ. ຕົວຢ່າງເຊັ່ນ, ຜູ້ຂົນສົ່ງຈະຕ້ອງຍື່ນເອກະສານໃບແຈ້ງໂທດໃນລະຫວ່າງຂັ້ນຕອນການສະໝັກວຽກ. ແຕ່ເຖິງຢ່າງໃດກໍຕາມ, ສິ່ງນີ້ກໍ່ແມ່ນຂໍ້ກຳນົດພຽງຄັ້ງດຽວເມື່ອເຂົາເຈົ້າໄດ້ຮັບການວ່າຈ້າງ ແລະ ຫົວໜ່ວຍບໍລິການກໍ່ອາດຈະບໍ່ຮູ້ວ່າ ຜູ້ຂົນສົ່ງມີສ່ວນຮ່ວມໃນເຄື່ອນໄຫວກະທຳຜິດທາງອາຍາໃນພາຍຫລັງຫຼືບໍ່, ກໍ່ຄືໃນຂະນະທີ່ເຮັດວຽກໃຫ້ບໍລິສັດນັ້ນເອງ.[114] ພະນັກງານສົ່ງເຄື່ອງໃນຊຸດເຄື່ອງແບບກໍ່ຍັງໄດ້ຮັບຜົນປະໂຫຍດຈາກການຜ່ອນຜັນຂອງຕຳຫຼວດ. ຜູ້ຂົນສົ່ງຄົນໜຶ່ງໄດ້ອະທິບາຍວ່າ ແນວໂນ້ມນີ້ແມ່ນເກີດຈາກຄວາມເຫັນອົກເຫັນໃຈຂອງຕຳຫຼວດທີ່ມີຕໍ່ຜູ້ຂົນສົ່ງ, ເຊິ່ງເຮັດໃຫ້ເຫັນວ່າ ເປັນສ່ວນໜຶ່ງຂອງອາຊີບທີ່ມີລາຍໄດ້ຕ່ຳ, ເຊັ່ນດຽວກັນກັບຄວາມໝັ້ນໃຈໃນລະບົບການກວດສອບທີ່ຜ່ານແອັບມືຖື. [115]

ດ້ວຍເທັກໂນໂລຢີການສ້າງແຜນທີ່ທີ່ມີຄວາມກ້າວໜ້າ, ແອັບມືຖືທີ່ໃຊ້ໃນການຈັດສົ່ງສິນຄ້າໄດ້ຊ່ວຍໃຫ້ຄວາມຖືກຕ້ອງທາງພູມສາດທີ່ມີຄວາມແມ່ນຢຳສູງໃຫ້ແກ່ຜູ້ຂົນສົ່ງໃນການຈັດສົ່ງສິນຄ້າຂອງເຂົາເຈົ້າ. ຕົວຢ່າງ, ທ່ານມາລີຍາ ໂຊດຕະກຸນຣັດຕະນາ (Maleeya Jotisakulratana), ຜູ້ອຳນວຍການຝ່າຍປະຊາສຳພັນກັບພາກລັດທີ່ ບໍລິສັດ ລາຍແມນ ວົງໄນ (LINE MAN Wongnai), ທີ່ເປັນໜຶ່ງໃນບໍລິສັດເທັກໂນໂລຢີ ແລະ ຊຸບເປີແອັບທີ່ໃຫຍ່ທີ່ສຸດຂອງປະເທດໄທ, ໄດ້ອະທິບາຍວ່າ ການບໍລິການຈັດສົ່ງນັ້ນ ຊ່ວຍຫຼຸດຜ່ອນຄວາມສ່ຽງການສູນເສຍຂອງສິນຄ້າໄດ້ແນວໃດ, ເຊິ່ງກົງກັນຂ້າມກັບວິທີການແຈກຢາຍສິນຄ້າແບບດັ້ງເດີມ, ເຊິ່ງບໍ່ສາມາດຕິດຕາມໄດ້ ແລະ ກໍ່ມີຄວາມສ່ຽງຕໍ່ການຖືກລັກຫຼາຍກວ່າ. ໃນທາງກົງກັນຂ້າມ, ເທັກໂນໂລຢີການຈັດສົ່ງນີ້ຊ່ວຍໃຫ້ສາມາດຕິດຕາມຜູ້ຂົນສົ່ງສິນຄ້າ, ເຊິ່ງຜູ້ຂັບນັ້ນ ກໍ່ບໍ່ຮູ້ເຖິງເນື້ອໃນທີ່ຜິດກົດໝາຍຂອງໂຕສິນຄ້າ.[116]

ຊ່ອງຫວ່າງຕ່າງໆທີ່ມີຢູ່ໃນນະໂຍບາຍກໍ່ຍັງອຳນວຍຄວາມສະດວກໃຫ້ແກ່ການຈັດສົ່ງຢາເສບຕິດໄດ້ຫຼາຍຂຶ້ນ. ເພື່ອປົກປ້ອງຜູ້ຂົນສົ່ງສິນຄ້າ ແລະ ລູກຄ້າຈາກບັນຫາການປົນເປື້ອນຂອງອາຫານ ຫຼື ຄວາມເສຍຫາຍທີ່ມີຕໍ່ພັດສະດຸ, ຜູ້ຂົນ ສົ່ງສິນຄ້າຖືກຫ້າມບໍ່ໃຫ້ເປີດເບິ່ງ ຫຼື ກວດເບິ່ງ ພັດສະດຸ. ເຖິງແມ່ນວ່ານະໂຍບາຍນີ້ແມ່ນໄດ້ຖືກອອກແບບມາເພື່ອປົກປ້ອງຄຸນນະພາບຂອງການບໍລິການໃນກໍລະນີທີ່ພັດສະດຸນັ້ນເປັນອາຫານ, ແຕ່ມັນກໍ່ຍັງເປັນການເປີດໂອກາດໃຫ້ຜູ້ຄ້າຂາຍຢາເສບຕິດສາມາດສວຍໃຊ້ປະໂຫຍດຈາກລະບົບນີ້ໄດ້. ຄວາມຈິງທີ່ວ່າ ການທີ່ພວກເຂົາເຈົ້າຖືກຫ້າມບໍ່ໃຫ້ເປີດເບິ່ງ ອາຫານນັ້ນ, ເຮັດໃຫ້ພວກເຂົາເຈົ້າສາມາດປະຕິເສດຄວາມຮັບຜິດຊອບໄດ້ຢ່າງແນບນຽນ, ເຊິ່ງກໍ່ເປັນອຸປະສັກຕໍ່ຄວາມພະຍາຍາມໃນການບັງຄັບໃຊ້ກົດໝາຍ.[117]

ປັດໄຈອີກອັນໜຶ່ງທີ່ສະຫນັບສະຫນູນກໍ່ແມ່ນການສຶກສາຄົ້ນຄວ້າຢ່າງເປັນລະບົບ ແລະ ຂ່າວສານທີ່ກ່ຽວກັບການຈຳຫນ່າຍຢາເສບຕິດໂດຍຜູ້ຂົນ ສົ່ງສິນຄ້ານັ້ນຍັງມີຈຳກັດ. ລາຍງານຂ່າວກ່ຽວກັບການມີສ່ວນຮ່ວມຂອງຜູ້ຂົນ ສົ່ງສິນຄ້າໃນຂະບວນການຄ້າຂາຍຢາເສບຕິດກໍ່ປາກົດເຫັນມີເປັນໄລຍະໆ,[118] ແຕ່ກໍ່ບໍ່ມີສະຖິຕິທາງການໃດໆ ທີ່ ໄດ້ຖືກເປີດເຜີຍໂດຍໜ່ວຍງານຂອງລັດເຊັ່ນ ອົງການອາຫານ ແລະ ຢາ (ONCB). [119] ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງມີການສຶກສາຄົ້ນຄວ້າເພີ່ມຕື່ມກ່ຽວກັບຮູບແບບຂອງການຈັດສົ່ງຢາເສບຕິດຜ່ານແອັບມືຖື, ວິທີການທີ່ຜູ້ຂົນສົ່ງສິນຄ້າເຊື່ອມຕໍ່ກັບຄົນກາງ ແລະ ເຄືອຂ່າຍການຂາຍສົ່ງ, ແລະ ບົດບາດຂອງການຈຳຫນ່າຍ ຢາເສບຕິດຜ່ານແອັບມືຖືສຳລັບຕະຫຼາດຢາເສບຕິດໃນປະເທດໄທ ແລະ ປະເທດອື່ນໆ.

ໃນຂະນະທີ່ການບໍລິການຈັດສົ່ງສິນຄ້າໄດ້ກາຍເປັນສ່ວນໜຶ່ງໃນຊີວິດປະຈຳວັນໃນກຸງເທບ, ແຕ່ການບໍລິການນີ້ກໍ່ຍັງຖືກສວຍໃຊ້ໂດຍບັນດາອາດຊະຍາກອນ. ຊ່ອງຫວ່າງທີ່ມີຢູ່ເພື່ອປົກປ້ອງຜູ້ບໍລິໂພກ ກໍ່ ມັກຖືກສວຍໃຊ້ໄດ້ຢ່າງງ່າຍດາຍໂດຍຜູ້ຄ້າຂາຍຢາເສບຕິດ ທີ່ໃຊ້ລະບົບການຈັດສົ່ງສິນຄ້າໃຫ້ກາຍເປັນໂຕ ຂະຫຍາຍເຄືອຂ່າຍການຈຳຫນ່າຍ ແລະ ຊຸກເຊື່ອງຢາເສບຕິດ ໂດຍສິນຄ້າຜິດກົດໝາຍຂອງພວກເຂົາໄດ້ປະປົນໃນບັນດາການສັ່ງຊື້ຈຳນວນຫຼາຍລ້ານທີ່ຖືກຕ້ອງຕາມກົດໝາຍ. 'ຜູ້ຄ້າຂາຍຢາເສບຕິດຊອກຫາຊ່ອງທາງ ທີ່ງ່າຍດາຍ ແລະ ບໍ່ສາມາດຖືກຕິດຕາມໄດ້ເພື່ອຈຳໜ່າຍ ສິນຄ້າຂອງພວກເຂົາ. ດ້ວຍເຫດນີ້ຈຶ່ງແມ່ນເຫດຜົນທີ່ວ່າ ເປັນຫຍັງບັນດາຊ່ອງທາງ ການຈັດສົ່ງສິນຄ້າຈຶ່ງມັກຖືກເລືອກໃຊ້,' ເຊິ່ງທ່ານ ໂຊດສະກຸນຣັດຕະນາກໍ່ໄດ້ກ່າວໄວ້.[120] ເຖິງຢ່າງໃດກໍຕາມ, ສິ່ງນີ້ຍັງຊີ້ໃຫ້ເຫັນເຖິງບັນຫາທີ່ເປັນສິ່ງທ້າທາຍຕົ້ນຕໍທີ່ຕ້ອງ ແກ້ໄຂເຊັ່ນກັນ ເຊັ່ນ: ເມື່ອໃດທີ່ສິນຄ້າພັດສະດຸໄດ້ຖືກສົ່ງໄປແລ້ວ, ຜູ້ຄ້າຂາຍກໍ່ຈະປອດໄພ ແລະ ມີແນວໂນ້ມຈະບໍ່ຖືກຈະຖືກດຳເນີນຄະດີ.'

## ເປັນຫຍັງປະເທດລາວຈຶ່ງຍັງພົບກັບຄວາມຍາກລຳບາກໃນການຄວບຄຸມ ແລະ ສືບສວນ-ສອບສວນ ທຸລະກິດກ່ຽວກັບການລັກລອບຂົນເງິນສົດ?

ໃນເດືອນກຸມພາ 2025, ອົງການຕ້ານການຟອກເງິນສາກົນ ຫຼື FATF ໄດ້ເພີ່ມປະເທດລາວເຂົ້າໄວ້ໃນບັນຊີ 'ເຂດອຳນາດສານທີ່ຢູ່ພາຍໃຕ້ການຕິດຕາມກວດກາທີ່ເຂັ້ມງວດຫຼາຍຂຶ້ນ'ຫຼື ບັນຊີ 'ສີເທົາ' ເຊິ່ງປະກອບໄປດ້ວຍກຸ່ມປະເທດທີ່ຕ້ອງໄດ້ຮັບການຕິດຕາມກວດກາຢ່າງເຂັ້ມງວດ ແລະ ເພີ່ມທະວີການຄຸ້ມຄອງ ໃຫ້ຫຼາຍຂຶ້ນເນື່ອງຈາກຍັງມີຂໍ້ບົກພ່ອງໃນກອບການດຳເນີນງານ ທີ່ກ່ຽວກັບການຕ້ານການຟອກເງິນ ແລະ ການສະຫນັບສະຫນູນເງິນທຶນໃຫ້ແກ່ການກໍ່ການຮ້າຍ. [121] ນີ້ແມ່ນໜຶ່ງໃນບັນດາເຫດຜົນທີ່ສະແດງໃຫ້ເຫັນ ຊ່ອງຫວ່າງຕ່າງໆທີ່ສຳຄັນທີ່ນຳໄປສູ່ການຫຼຸດລະດັບຄວາມສາມາດຂອງປະເທດໃດໜຶ່ງ ແມ່ນອີງຕາມການປະເມີນ ແລະ ຄວາມເຂົ້າໃຈກ່ຽວກັບຄວາມສ່ຽງຂອງປະເທດ. ໃນບົດລາຍງານການປະເມີນຮ່ວມປະຈຳປີ 2023, FATF ໄດ້ກ່າວໄວ້ວ່າ 'ເຈົ້າໜ້າທີ່ຂອງລາວມີຄວາມເຂົ້າໃຈໃນລະດັບຕ່ຳກ່ຽວກັບຄວາມສ່ຽງໃນທຸກຂະແໜງການ', ລວມທັງ 'ການຂາດນະໂຍບາຍ, ກົດລະບຽບ ແລະ ຄວາມພະຍາຍາມໃນການບັງຄັບໃຊ້ຢ່າງສອດຄ່ອງ ແລະ ກົມກຽວເພື່ອສາມາດກຳນົດ ແລະ ຫຼຸດຜ່ອນຄວາມສ່ຽງ'.[122]

ໜຶ່ງໃນບັນດາຄວາມສ່ຽງທີ່ຍັງເຂົ້າໃຈບໍ່ທັນໄດ້ດີນັ້ນ, ຕາມທີ່ໄດ້ລະບຸໄວ້ໃນບົດລາຍງານການປະເມີນຮ່ວມປີ 2023 ກໍ່ແມ່ນການນຳໃຊ້ເງິນສົດຢ່າງຕໍ່ເນື່ອງທີ່ແຜ່ຫຼາຍໃນລາວ. ໂດຍສະເພາະຢ່າງຍິ່ງ, ບົດລາຍງານດັ່ງກ່າວໄດ້ຍົກເອົາບັນຫາຄວາມກັງວົນກ່ຽວກັບຄວາມອາດສາມາດ ຂອງລາວໃນການຕອບໂຕ້ຕໍ່ການລັກລອບຂົນເງິນສົດທີ່ກ່ຽວຂ້ອງກັບການຄວບຄຸມຊາຍແດນ.[123] ເຖິງຢ່າງໃດ ກໍ່ຕາມ, ການລັກລອບຂົນເງິນສົດກໍ່ເບິ່ງຄືວ່າ ລັດຖະບານລາວຍັງໃຫ້ຄວາມສຳຄັນບໍ່ຫຼາຍເທົ່າທີ່ຄວນ, ໂດຍສ່ວນໃຫຍ່ແລ້ວ, ແມ່ນໃຫ້ຄວາມສົນໃຈກັບການຫຼຸດຜ່ອນຄວາມສ່ຽງຂອງ ຟິນເທັກ (fintech), ສະກຸນເງິນດິຈິຕອນ (cryptocurrency) ແລະ ຄາສິໂນສຳລັບຂະບວນການອາຊະຍາກຳ.




ຮູບທີ 6 ຈຸດຜ່ານແດນ ແລະ ແຫລ່ງການລັກລອບຂົນເງິນສົດທີ່ສໍາຄັນຂອງປະເທດລາວ.

## ເງິນສົດກໍ່ຍັງຄົງເປັນປັດໄຈທີ່ສໍາຄັນທີ່ສຸດ.

ອີງຕາມດັດຊະນີອາຊະຍາກໍາທີ່ມີການຈັດຕັ້ງໃນທົ່ວໂລກປີ 2025 ຂອງໂຄງການລິເລີ້ມລະດັບໂລກເພື່ອຕໍ່ຕ້ານອາຊະຍາກໍາຂ້າມຊາດ ຫລື GI-TOC, ປະເທດລາວເປັນທີ່ຕັ້ງຂອງຕະຫຼາດອາຊະຍາກໍາຫຼາກຫຼາຍປະເພດເຊິ່ງມີຜົນກໍາໄລສູງ ແລະ ມີອິດທິພົນທາງລົບຕໍ່ເກືອບທຸກພາກສ່ວນຂອງສັງຄົມ. ໃນນີ້ລວມມີການແຜ່ຫຼາຍຂອງການຄ້າມະນຸດ, ອາຊະຍາກໍາ ສິ່ງແວດລ້ອມ, ຢາເສບຕິດສັງເຄາະ ແລະ ອາຊະຍາກໍາທາງດ້ານການເງິນ.[124] ເງິນສົດແມ່ນຮູບແບບການຈ່າຍເງິນທີ່ສໍາຄັນສໍາລັບເຄືອຂ່າຍອາຊະຍາກໍາ: ໂດຍຖືກໃຊ້ເພື່ອຈ່າຍສິນບົນໃຫ້ແກ່ເຈົ້າໜ້າທີ່, ເພື່ອຄວບຄຸມຄ່າໃຊ້ຈ່າຍໃນການດໍາເນີນການສໍາລັບການຫຼອກລວງທາງອິນເຕີເນັດ ຫຼື ເພື່ອຊື້ຜະລິດຕະພັນສັດປ່າ ແລະ ຢາເສບຕິດທີ່ຜິດກົດໝາຍ. [125]

ເນື່ອງຈາກວ່າແຫຼ່ງທີ່ມາຂອງເງິນສົດນັ້ນບໍ່ສາມາດລະບຸໄດ້ຢ່າງງ່າຍດາຍ, ການເຮັດທຸລະກໍາດ້ວຍເງິນສົດຈຶ່ງສາມາດຫຼີກລ້ຽງການກວດສອບລະບົບການຕິດຕາມເສັ້ນທາງການເງິນທີ່ ເປັນທາງການ ແລະ ເປັນການເປີດໂອກາດໃຫ້ເຄືອຂ່າຍອາດຊະຍາກໍາສາມາດເຄື່ອນຍ້າຍຊັບສິນໄດ້ຢ່າງປິດລັບ. ເສດຖະກິດນອກລະບົບຂະໜາດໃຫຍ່ຂອງລາວ (ໃນປີ 2017 ສ່ວນແບ່ງຂອງການຈ້າງງານນອກລະບົບໄດ້ຖືກຄາດຄະເນໄວ້ທີ່ 82.9 ເປີເຊັນ) ກໍ່ຍັງເປັນໂອກາດທີ່ສໍາຄັນສໍາລັບການລັກລອບຂົນເງິນສົດ, ໂດຍການນໍາເງິນເຫລົ່ານີ້ໄປປະປົນລວມກັນກັບເງິນທີ່ຈະໃຊ້ໃນການໃຊ້ຈ່າຍທີ່ຖືກຕ້ອງຕາມກົດໝາຍໃຫ້ແກ່ບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍເຊັ່ນ: ຮ້ານອາຫານ, ບາຣ໌ ຫຼື ບໍລິສັດບັນເທີງຕ່າງໆ.[126] ການຈ່າຍດ້ວຍເງິນສົດກໍ່ຍັງຖືກນໍາໄປໃຊ້ຢ່າງກວ້າງຂວາງໃນຄາສິໂນ, ການກໍ່ສ້າງ ແລະ ອະສັງຫາລິມະຊັບ, ເຊິ່ງເປັນອຸດສາຫະກໍາທີ່ຖືວ່າມີຄວາມສ່ຽງສູງຕໍ່ການຟອກເງິນໃນລາວ.[127]

ຄວາມສຳຄັນຂອງເງິນສົດ ໃນຖານະທີ່ເປັນວິທີການຈ່າຍ ສຳລັບເຄືອຂ່າຍອາດຊະຍາກຳ, ໄດ້ສະແດງໃຫ້ເຫັນໂດຍການຍຶດເງິນສົດຈຳນວນຫຼວງຫຼາຍຢູ່ຊາຍແດນຂອງລາວ. ບົດລາຍງານທີ່ບໍ່ເປັນທາງການທີ່ໄດ້ຮັບຈາກເຈົ້າໜ້າທີ່ລາວໄດ້ລະບຸໄວ້ວ່າ ລະຫວ່າງປີ 2024 ແລະ 2025, ມີການສະກັດຈັບເງິນສົດທີ່ບໍ່ໄດ້ແຈ້ງໄວ້ທັງໝົດ 36 ກໍລະນີ, ທີ່ຢູ່ຕາມດ່ານຊາຍແດນສາກົນທີ່ສຳຄັນໃນນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ຄຳມ່ວນ, ເຊິ່ງສົ່ງຜົນໃຫ້ການຈັບກຸມບຸກຄົນທີ່ກ່ຽວຂ້ອງກັບການລັກລອບຂົນຍ້າຍເງິນສົດ ໄດ້ 36 ຄົນ, ປະກອບໄປດ້ວຍຄົນຈີນສີ່ຄົນ, ຄົນໄທເຈັດຄົນ, ຄົນຫວຽດນາມສາມຄົນ ແລະ ຄົນລາວ 11 ຄົນ. ສະກຸນເງິນທີ່ຖືກຍຶດຫຼາຍທີ່ສຸດແມ່ນ ເງິນບາດໄທ, ເງິນຢວນຈີນ ແລະ ເງິນໂດລາສະຫະລັດ, ເຊິ່ງມີມູນຄ່າທັງໝົດ 614.865 ໂດລາສະຫະລັດ. ເຈົ້າໜ້າທີ່ລະດັບສູງຄົນໜຶ່ງໄດ້ກ່າວວ່າ ມາຮອດເດືອນກັນຍາ 2025, ໃນປີນັ້ນພວກເຂົາເຈົ້າສາມາດກວດພົບເງິນສົດທີ່ບໍ່ໄດ້ແຈ້ງຈຳນວນ ເຊິ່ງມີຢູ່ 10 ກໍລະນີ "ສ່ວນໃຫຍ່ແມ່ນກ່ຽວຂ້ອງກັບທຸລະກິດແລກປ່ຽນເງິນຕາທີ່ຜິດກົດໝາຍ".[128] ສະຖານະການເຫຼົ່ານີ້ແມ່ນພົບເຫັນໄດ້ທົ່ວໄປໃນລາວ, ເນື່ອງຈາກວ່າທະນາຄານແຫ່ງປະເທດລາວໄດ້ສັ່ງຫ້າມໜ່ວຍແລກປ່ຽນເງິນຕາໃນບັນດາທະນາຄານການຄ້າຕ່າງໆບໍ່ໃຫ້ມີການຂາຍເງິນຕາຕ່າງປະເທດໃນເດືອນຕຸລາ 2022 ເພື່ອຊຸກຍູ້ການໃຊ້ເງິນກີບ ແລະ ຢຸດການອ່ອນຄ່າຂອງເງິນກີບ. ໃນເດືອນມັງກອນ 2023, ທະນາຄານໄດ້ຍົກເລີກໃບອະນຸຍາດການດຳເນີນທຸລະກິດຂອງທຸລະກິດແລກປ່ຽນເງິນຕາ 113 ແຫ່ງທີ່ກ່ຽວຂ້ອງກັບທະນາຄານການຄ້າ.[129]

## ເສັ້ນທາງ ແລະ ເຕັກນິກການລັກລອບຂົນເງິນສົດເຂົ້າປະເທດ

ປະເທດລາວມີດ່ານຜ່ານແດນສາກົນ 33 ແຫ່ງ, ປະກອບດ້ວຍດ່ານຜ່ານແດນທາງບົກ, ສະໜາມບິນສາກົນ, ທາງລົດໄຟ ແລະ ດ່ານທາງນ້ຳ. [130] ລາຍງານທີ່ກ່ຽວກັບເຫດການຕ່າງໆຊີ້ໃຫ້ເຫັນວ່າ ດ່ານຜ່ານແດນທີ່ເປັນທາງການຈຳນວນໜຶ່ງມັກຖືກສວຍໃຊ້ໃນການລັກລອບຂົນເງິນສົດ (ເບິ່ງຮູບທີ 6). ດ່ານເຫລົ່ານີ້ກໍ່ລວມມີຂົວມິດຕະພາບລາວ-ໄທທີ່ຢູ່ລະຫວ່າງ ວຽງຈັນ-ໜອງຄາຍ, ສະຫວັນນະເຂດ-ມຸກດາຫານ, ຄຳມ່ວນ-ນະຄອນພະນົມ ແລະ ຫ້ວຍຊາຍ-ຊຽງຂອງ. ຜູ້ລັກລອບຂົນເງິນສົດມັກຈະເຊື່ອງເງິນສົດໄວ້ໃນບ່ອນເກັບເຄື່ອງໃນລົດສ່ວນຕົວ, ສິນຄ້າ, ເຄື່ອງຈັກ ຫຼື ກະເປົ໋າເດີນທາງ. [131]

ສະໜາມບິນສາກົນວັດໄຕເປັນຊ່ອງທາງໜຶ່ງທີ່ມີບົດບາດເຊັ່ນດຽວກັນ ທີ່ຖືກສວຍໃຊ້ໃນເຄື່ອນໄຫວການລັກລອບຂົນເງິນສົດ, ເຊິ່ງເປັນຈຸດທີ່ຜູ້ລັກລອບ - ສ່ວນໃຫຍ່ແລ້ວແມ່ນຄົນຈີນ ແລະ ຄົນຕ່າງປະເທດອື່ນໆ - ຂົນເງິນສົດທີ່ບໍ່ໄດ້ແຈ້ງຈຳນວນເພື່ອໄປຍັງຈຸດໝາຍປາຍທາງຕ່າງໆ, ໂດຍມັກຈະເຊື່ອງເງິນໄວ້ໃນກະເປົ໋າເດີນທາງ ຫຼື ເຊື່ອງໄວ້ຕິດຕົວກັບເຂົາເຈົ້າເອງ.

ຢູ່ຊາຍແດນທີ່ຕິດກັບປະເທດຫວຽດນາມ ແລະ ກຳປູເຈຍ, ມີລາຍງານການລັກລອບຂົນເງິນສົດຢູ່ຕາມສະຖານທີ່ຕ່າງໆທີ່ເປັນດ່ານຜ່ານແດນສາກົນເຊັ່ນ: ດ່ານ ເກົາແຈວ (Cau Treo) - ນ້ຳພາວ, ແລະ ນາເພົ້າ ຈາຫລໍ (Chalo) (ທັງສອງແຫ່ງແມ່ນດ່ານທີ່ຕິດກັບຫວຽດນາມ) ແລະ ດ່ານ ເວີນຄຳ - ດົມກຣະລໍ (Veun KhamDom Kralor) (ທີ່ມີຊາຍແດນຕິດກັບກຳປູເຈຍ). ຜູ້ລັກລອບຂົນເງິນມັກຈະເຊື່ອງເງິນໄວ້ໃນຮ່າງກາຍຂອງນັກທ່ອງທ່ຽວທີ່ໃຊ້ຍານພາຫະນະຂົນສົ່ງສາທາລະນະ, ເຊັ່ນດຽວກັນກັບການເຊື່ອງໄວ້ໃນກ່ອງ, ກະເປົ໋າເດີນທາງ ຫຼື ກ່ອງທີ່ເອົາໄປເຊື່ອງໄວ້ຢູ່ໃນຍານພາຫະນະ.[132]

ເຖິງຢ່າງໃດກໍ່ຕາມ, ເງິນສົດສ່ວນໃຫຍ່ທີ່ມີການເຄື່ອນຍ້າຍເຂົ້າ-ອອກປະເທດລາວມັກຈະມີແນວໂນ້ມທີ່ຈະບໍ່ຖືກກວດພົບ ໂດຍສະເພາະການລັກລອບຂ້າມແມ່ນ້ຳຂອງ, ເຊັ່ນດຽວກັນກັບຊາຍແດນເຂດພູດອຍທີ່ຢູ່ຫ່າງໄກຂອງປະເທດລາວ. ຕົວຢ່າງ, ສາມຫຼ່ຽມຄຳ, ເຊິ່ງເປັນຈຸດທີ່ເຂດແດນປະເທດລາວ, ມຽນມາ ແລະ ໄທ ເຊື່ອມຕິດກັນ, ເຊິ່ງເປັນທີ່ຮູ້ຈັກກັນດີໃນກິດຈະກຳທີ່ຜິດກົດໝາຍທີ່ກ່ຽວຂ້ອງກັບເງິນສົດຈຳນວນຫຼວງຫຼາຍ. ມີລາຍງານວ່າ ຜູ້ລັກລອບຂົນເງິນຈາກລັດຊານ, ປະເທດມຽນມາ, ເຂົ້າໄປໃນເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ, ຢູ່ໃກ້ກັບດ່ານວັງປຸ່ງ-ເມືອງມອມ, ໂດຍໃຊ້ປະໂຫຍດຈາກພູມິປະເທດທີ່ຫຍຸ້ງຍາກ.[133] ອະດີດເຈົ້າໜ້າທີ່ຊາຍແດນຂອງລາວໄດ້ອະທິບາຍວ່າ ກຸ່ມ ອາດຊະຍາກອນນັ້ນ, ມັກຈະຈ້າງພະນັກງານສົ່ງສິນຄ້າເພື່ອຂົນເງິນຕາປະເທດຈີນ ແລະ ສະຫະລັດອາເມລິກາເຂົ້າໄປໃນປະເທດລາວ, ບາງທີອາດຈະຖືກນຳໃຊ້ເປັນທຶນໃນການດຳເນີນການ ຫຼື ເພື່ອຈຸດປະສົງການຟອກເງິນ, ໃນຂະນະດຽວກັນກໍ່ຫຼີກລ່ຽງການກວດສອບທີ່ຊາຍແດນຢ່າງເປັນທາງການ. [134] ເຮືອຂະໜາດນ້ອຍໄດ້ຖືກນຳໄປໃຊ້ໃນຕອນກາງຄືນຕາມແຄມແມ່ນ້ຳຈຸດທີ່ແຄບໆ, ໂດຍເງິນສ່ວນໃຫຍ່ກໍ່ແມ່ນມາຈາກຄາສິໂນ ແລະ ການຄ້າຢາເສບຕິດໃນມຽນມາ. ເຖິງແມ່ນວ່າຈະມີທັງໜ່ວຍງານລາດຕະເວນຊາຍແດນລາວ ແລະ ມຽນມາດຳເນີນການຕິດຕາມກວດກາຕາມແມ່ນ້ຳຂອງກໍ່ຕາມ, ເຈົ້າໜ້າທີ່ພາສີອາວຸໂສຂອງລາວກ່າວວ່າ, ທ່ານກໍ່ຮູ້ດີວ່າ ຜູ້ລັກລອບຂົນເງິນນັ້ນຈ່າຍສິນບົນເພື່ອອຳນວຍຄວາມສະດວກໃນການຜ່ານແດນ.[135] ການຈ່າຍສິນບົນຢູ່ດ່ານຊາຍແດນຖືວ່າເປັນເລື່ອງທຳມະດາ ແລະ ກໍ່ເຄີຍມີລາຍງານມາກ່ອນຢູ່ແລ້ວ.[136] ເມື່ອເງິນຖືກຂົນມາຮອດຝັ່ງລາວແລ້ວ, ເງິນສົດກໍ່ຈະຖືກເກັບຮັກສາໄວ້ໂດຍຜູ້ສົມຮູ້ຮ່ວມຄິດ ແລະ ຂົນຂຶ້ນລົດເພື່ອໄປຍັງຕົວເມືອງຕ່າງໆ ເຊັ່ນ: ຫຼວງພະບາງ ແລະ ວຽງຈັນ. ວິທີການທີ່ຄ້າຍຄືກັນນີ້ ກໍ່ໄດ້ຖືກນຳໄປໃຊ້ຕາມແລວເສັ້ນທາງໄທ-ລາວ, ໂດຍມີການປ່ຽນແປງເລັກນ້ອຍ: ບຸກຄົນທີ່ເປັນຄົນໄທມັກຈະເຊື່ອງເງິນສົດໄວ້ໃນກ່ອງ, ເຊິ່ງຖືກຂົນໄປໂດຍເຮືອຮັບສົ່ງຈາກຊຽງແສນໄປຫ້ວຍຊາຍ, ເຊິ່ງເປັນບ່ອນທີ່ຜູ້ສົມຮູ້ຮ່ວມຄິດຈະໄປຮັບເອົາກ່ອງນັ້ນ ເມື່ອມາຮອດຝັ່ງລາວ ແລະ ຫຼັງຈາກນັ້ນ, ກໍ່ຂົນໄປຍັງເຂດເສດຖະກິດພິເສດສາມຫຼ່ຽມຄຳ.[137]

## ຂອບກົດໝາຍຂອງປະເທດລາວ

ປະເທດລາວອະນຸຍາດໃຫ້ບຸກຄົນທົ່ວໄປສາມາດນຳເງິນສົດເຂົ້າ- ອອກຈາກປະເທດໄດ້ສູງເຖິງ 150.000.000 ກີບ, ທີ່ມີມູນຄ່າປະມານ 6.934 ໂດລາສະຫະລັດອາເມລິກາ, ເຊິ່ງເປັນຕົວເລກທີ່ຕ່ຳກວ່າມາດຕະຖານສາກົນປະມານ 10.000 ໂດລາສະຫະລັດ.[138] ກົມພາສີຂອງລາວມີສິດອຳນາດໃນການຢຸດ, ກວດສອບ ແລະ ຍຶດ ລວມທັງ ສືບສວນກໍລະນີການລັກລອບນຳເງິນສົດເຂົ້າປະເທດ. ນອກຈາກນັ້ນ, ກົມພາສີກໍ່ຍັງມີພັນທະທີ່ຕ້ອງລາຍງານກິດຈະກຳການລັກລອບນຳເງິນສົດເຂົ້າປະເທດທີ່ໜ້າສົງໄສທັງໝົດທີ່ອາດຈະກ່ຽວຂ້ອງກັບການຟອກເງິນ, ແລະ ແຈ້ງຜົນການສືບສວນໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ).

ໃນທາງທິດສະດີ, ເງິນຈຳນວນໃດໆທີ່ໄດ້ນຳເຂົ້າໄປໃນປະເທດລາວ, ເຊິ່ງມີຈຳນວນເກີນຕາມທີ່ກົດໝາຍໄດ້ກຳນົດໄວ້ນັ້ນ, ກໍ່ຕ້ອງໃຫ້ແຈ້ງຕໍ່ເຈົ້າໜ້າທີ່ພາສີຢູ່ດ່ານຊາຍແດນ. ເຊັ່ນດຽວກັນນັ້ນ, ການນຳເງິນຈຳນວນຫຼວງຫຼາຍອອກຈາກປະເທດລາວ, ກໍ່ຕ້ອງໄດ້ຮັບການອະນຸມັດລ່ວງໜ້າຈາກທະນາຄານແຫ່ງ ສປປ ລາວ.

ຄຳແນະນຳຂອງກະຊວງການເງິນວ່າດ້ວຍມາດຕະການຕ້ານການລັກລອບຂົນເງິນສົດຈຳນວນຫຼາຍ ແລະ ການຟອກເງິນ ປີ 2025, ເລກທີ 0276/MOF, ລະບຸວ່າບຸກຄົນທີ່ຝ່າຝືນລະບຽບການເຫຼົ່ານີ້ ຫຼື ຈົງໃຈບໍ່ລາຍງານເງິນສົດຈະຖືກປັບໃໝ 50 % ຂອງຈຳນວນເງິນທີ່ເປັນສ່ວນເກີນສຳລັບການກະທຳຜິດຄັ້ງທຳອິດ, ໂດຍມີການລົງໂທດຈະເພີ່ມຂຶ້ນເປັນສອງເທົ່າສຳລັບການກະທຳຜິດຊ້ຳອີກ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ເບິ່ງຄືວ່າຈະຂັດກັບກົດໝາຍວ່າດ້ວຍການຄວບຄຸມເງິນຕາຕ່າງປະເທດ (ປີ 2022), ເຊິ່ງກຳນົດໃຫ້ມີການລົງໂທດໂດຍການປັບໃໝ 10 % ຂອງຈຳນວນເງິນທີ່ເກີນເມື່ອເງິນສົດທັງໝົດເກີນ 10.000.000 ກີບ (ປະມານ 450 ໂດລາສະຫະລັດອາເມລິກາ). ນອກຈາກນັ້ນ, ປະມວນກົດໝາຍອາຍາ (ປີ 2017) ລະບຸວ່າ ຜູ້ກະທຳຜິດອາດຈະປະເຊີນກັບໂທດຈຳຄຸກຫົກເດືອນຫາສອງປີສຳລັບການແຈ້ງຈຳນວນເງິນທີ່ຜິດໄປຈາກຄວາມເປັນຈິງ (ໂທດສຳລັບການຟອກເງິນຈະສູງກວ່າ).[139]

ໃນທາງປະຕິບັດ, ຖ້າຫາກມີການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຢູ່ດ່ານຊາຍແດນ, ເຈົ້າໜ້າທີ່ກໍ່ອາດຈະຂໍໃຫ້ຜູ້ເດີນທາງພິສູດແຫຼ່ງທີ່ມາທີ່ຖືກຕ້ອງຕາມກົດໝາຍຂອງເງິນທຶນຂອງເຂົາເຈົ້າໃນຮູບແບບຂອງໃບແຈ້ງຍອດບັນຊີທະນາຄານ, ໃບແຈ້ງໜີ້, ສັນຍາ ຫຼື ບັນທຶກການຈ້າງງານ ເພື່ອທຳການກວດສອບການເຊື່ອມໂຍງກັບການຟອກເງິນ ຫຼື ການສະໜັບສະໜູນທາງການເງິນໃຫ້ແກ່ການກໍ່ການຮ້າຍ. ດັ່ງທີ່ເຈົ້າໜ້າທີ່ພາສີຄົນໜຶ່ງໄດ້ອະທິບາຍວ່າ, 'ເມື່ອພວກເຮົາກວດພົບກໍລະນີການລັກລອບຂົນເງິນສົດເຂົ້າມາ, ກ່ອນອື່ນໝົດ, ພວກເຮົາຈະຄວບຄຸມບຸກຄົນດັ່ງກ່າວ ແລະ ບັນທຶກລາຍລະອຽດທັງໝົດທີ່ກ່ຽວກັບເຫດການນີ້. ສ່ວນເງິນທີ່ບໍ່ໄດ້ແຈ້ງໄວ້ນັ້ນ, ກໍ່ຈະຖືກຍຶດໄວ້ຊົ່ວຄາວເພື່ອການສືບສວນ ແລະ ຖ້າຫາກບໍ່ມີການເຊື່ອມໂຍງກັບການຟອກເງິນ, ພວກເຮົາກໍ່ຈະປັບໃໝ ແລະ ສົ່ງຄືນສ່ວນທີ່ເຫຼືອ.'[140] ການປັບໃໝນັ້ນ, ເບິ່ງແລ້ວກໍ່ເຫັນວ່າເປັນການປະຕິບັດທີ່ພົບເຫັນທົ່ວໄປຫຼາຍທີ່ສຸດ, ເນື່ອງຈາກມີການຍຶດເງິນທັງໝົດ 36 ຄັ້ງໃນລະຫວ່າງປີ 2024 ແລະ 2025 ເຊິ່ງໄດ້ຮັບການແກ້ໄຂດ້ວຍການປັບໃໝຕາມປົກກະຕິ.

ກໍລະນີທີ່ອາດຈະມີການເຊື່ອມໂຍງກັບການຟອກເງິນນັ້ນ, ຄວນຈະຖືກສົ່ງຕໍ່ໄປຫາຕຳຫຼວດ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ມາຮອດປະຈຸບັນນີ້, ກໍ່ຍັງບໍ່ທັນ ພົບກໍລະນີການລັກລອບຂົນເງິນສົດທີ່ມີສ່ວນກ່ຽວຂ້ອງກັບການຟອກເງິນ ຫຼື ການສະໜັບສະໜູນທາງການເງິນໃຫ້ແກ່ການກໍ່ການຮ້າຍ, ແລະ ກໍ່ຍັງບໍ່ມີກໍລະນີໃດທີ່ໄດ້ຮັບການສືບສວນ ຫຼື ດຳເນີນຄະດີຢ່າງເຕັມຮູບແບບ. ການສັງເກດການນີ້ແມ່ນໄດ້ຮັບການຢືນຢັນຈາກເຈົ້າໜ້າທີ່ຍຸຕິທຳອາວຸໂສຂອງລາວ, ທີ່ໄດ້ກ່າວວ່າ ການປັບໃໝມັກຈະຖືກນຳໃຊ້ເປັນມາດຕະການທີ່ມີຄວາມ 'ເປັນມິດ'.[141] ເຈົ້າໜ້າທີ່ອີກຄົນໜຶ່ງໄດ້ອະທິບາຍວ່າ ເຖິງແມ່ນວ່າກົດໝາຍຈະໃຫ້ສິດອຳນາດໃຫ້ແກ່ເຈົ້າໜ້າທີ່ໃນການດຳເນີນຄະດີທາງອາຍາ, ແຕ່ນັບຕັ້ງແຕ່ປີ 2020 ເປັນຕົ້ນມາ, ກໍ່ບໍ່ມີຄະດີລັກລອບຂົນເງິນສົດໃດໆທີ່ໄດ້ຖືກສົ່ງໄປຫາກົມຕຳຫຼວດເສດຖະກິດເລີຍ.[142]

## ການຍົກເອົາບັນຫາການລັກລອບຂົນເງິນສົດຂຶ້ນມາພິຈາລະນາອີກເທື່ອໜຶ່ງ

ການຂຶ້ນບັນຊີສີເທົາຂອງ FATF ໄດ້ກະຕຸ້ນໃຫ້ຕ້ອງມີການຍົກລະດັບການຮ່ວມມືໃນການແກ້ໄຂບັນຫາການຕ້ານການຟອກເງິນ, ແລະ ຄະນະດຳເນີນງານກໍ່ກຳລັງໃຫ້ການສະໜັບສະໜູນປະເທດລາວຜ່ານຂະບວນການນີ້. ໃນອະນາຄົດ, ເມື່ອກົດໝາຍໄດ້ຮັບການປັບປຸງໃຫ້ສອດຄ່ອງກັບແນວທາງຂອງ FATF ແລ້ວ, ກໍ່ຈະເປັນສິ່ງສຳຄັນທີ່ເຈົ້າໜ້າທີ່ເຫຼົ່ານີ້ຕ້ອງມີຄວາມກົມກຽວກັນ ແລະ ເຈົ້າຫນ້າທີ່ຜູ້ຮັບຜິດຊອບກໍ່ຕ້ອງເຂົ້າໃຈລະບຽບການທີ່ກ່ຽວຂ້ອງຢ່າງເຕັມສ່ວນ. ມີຄວາມຕ້ອງການອັນຮີບດ່ວນທີ່ຈະຍົກລະດັບຄວາມອາດສາມາດຂອງຫນ່ວຍງານຄຸ້ມຄອງຊາຍແດນ, ໂດຍສະເພາະແມ່ນກົມພາສີ, ເພື່ອດຳເນີນການສະກັດກັ້ນ, ກວດກາ ແລະ ຍຶດ ແລະ ສືບສວນກໍລະນີການລັກລອບຂົນເງິນສົດ, ການສໍ້ລາດບັງຫຼວງ ແລະ ການຟອກເງິນທີ່ກ່ຽວຂ້ອງ.

ປະເທດລາວຍັງມີຫຼາຍສິ່ງທີ່ຕ້ອງບັນລຸທາງດ້ານມາດຕະການຕ້ານການຟອກເງິນ, ແລະ ເງິນສົດກໍ່ແມ່ນພຽງແຕ່ໜຶ່ງໃນບັນດາຄວາມສ່ຽງຫຼາຍໆຢ່າງ. ຄວາມຄືບໜ້າໃດໆທີ່ເກີດຂຶ້ນພາຍໃນກໍ່ຈຳເປັນຕ້ອງຄຽງຄູ່ໄປກັບການສະໜັບສະໜູນຈາກສາກົນເພື່ອຊ່ວຍໃຫ້ເຈົ້າໜ້າທີ່ໃນການດຳເນີນການສືບສວນຄະດີການລັກລອບຂົນເງິນສົດ ແລະ ຕິດຕາມການຍຶດເຄື່ອງຂອງກາງ; ພ້ອມທັງໃຫ້ມີຄວາມເຂົ້າໃຈໄດ້ດີຂຶ້ນກວ່າເກົ່າກ່ຽວກັບວິທີການທີ່ ກຸ່ມອາດຊະຍາກອນໄດ້ຮັບເງິນສະກຸນທ້ອງຖິ່ນຈຳນວນຫຼວງຫຼາຍໄດ້ແນວໃດ ແລະ ເງິນສົດເຫລົ່ານັ້ນໄດ້ຖືກນຳໄປໃຊ້ແນວໃດ. ການສົ່ງເສີມການມີສ່ວນຮ່ວມທາງດ້ານການເງິນໂດຍການຍົກລະດັບດ້ານພ້ອມຂອງການບໍລິການທະນາຄານຢ່າງເປັນທາງການນັ້ນ, ກໍ່ສາມາດຊ່ວຍຫຼຸດຜ່ອນເສດຖະກິດນອກລະບົບ ແລະ ກໍ່ຍັງຊ່ວຍຫຼຸດຜ່ອນໂອກາດທີ່ກຸ່ມອາດຊະຍາກຳຈະໄດ້ປະໂຫຍດຈາກເສດຖະກິດນອກລະບົບນັ້ນໄດ້. ■